# ບົດທີ 7

# ຄຳອ້ອນວອນຕາມແບບພະເຢຊູຊົງສອນ



ແນ່ນອນ ຂ້ອຍທ່ອງຂຶ້ນໃຈຄຳອ້ອນວອນນັ້ນແຕ່ເມື່ອ
ເປັນເດັກແຕ່ທີ່ຈິງບໍ່ໄດ້ເຂົ້າໃຈເນື້ອໃນເທື່ອ.



ຂ້ອຍຮູ້ຄຳອ້ອນວອນຂອງພະເຢຊູນັ້ນດີຫຼາຍ
ຝຶກມາຈົນກ່ວາຈະເລົ່າໃຫ້ຈົບໄດ້ພຽງແຕ່ 2 ນາທີ.



ໄດ້ຍິນຄຳອ້ອນວອນນັ້ນຢູ່ສະເໝີໃນປະຊຸມ
ແຕ່ບໍ່ຮູ້ເຫດທີ່ເຂົາເວົ້າ.



ຂ້ອຍບໍ່ມັກອ້ອນວອນຕາມແບບນັ້ນຈັກເທື່ອ ເບິ່ງ
ຄືວ່າອ້ອນວອນຕາມແບບຕົວເອງເໝາະກ່ວາ.

**1** ຄຳອ້ອນວອນທີ່ ພະເຢຊູ ຊົງສອນໃນຄຳເທດສະໜາຢູ່ຈ້າຍພູນັ້ນຢູ່ໃນສ່ວນກົດລະບຽບຕໍ່ຕ້ານຄົນໜ້າຊື່ໃຈຄົດ. ຄື ຢູ່ຕັ້ງແຕ່ບົດໃດ ຂໍ້ໃດເຖິງຂໍ້ໃດໃນຄຳພີ? ______________________

| |
|---|
| ຝຶກ: ໃຫ້ທ່ານກັບໄປອ່ານ ມທ 6:9-13 ຕະຫຼອດອີກເທື່ອໜຶ່ງ. |

**2** ຄຳອ້ອນວອນນັ້ນເຄີຍເອີ້ນຊື່ວ່າຢ່າງໃດ? (ເລືອກໝາຍເອົາຂໍ້ທີ່ຖືກ 3 ປະການ)

ກ. ການພາວະນາ.

ຂ. ຄຳອ້ອນວອນຕາມແບບ.

ຄ. ຄຳອ້ອນວອນສາລະພາບຜິດບາບ.

ງ. ຄຳອ້ອນວອນທີ່ ພະເຢຊູຊົງສອນ.

ຈ. ຄຳອ້ອນວອນແຫ່ງແຜ່ນດິນ.

ສ. ຄຳສວດມົນ.

**3** ໃຫ້ອ່ານ ມທ 6:9 ກ່ອນທີ່ເຮົາຈະເລີ້ມຕົ້ນປາກເຮົາຕ້ອງຮູ້ວ່າແມ່ນຜູ້ໃດເປັນຜູ້ຟັງ. ຂໍ້ນີ້ສະເພາະເພື່ອໃຫ້ເຮົາຮັບຮູ້ ວ່າເຮົາຈະອ້ອນວອນຕໍ່ພະບິດາເຈົ້າ. ກ່ອນທີ່ຈະຫຍັບມາຕໍ່ໜ້າພະອົງເຈົ້າເຮົາຕ້ອງຮັບຮູ້ວ່າ ພະເຈົ້າຄືໃຜມີລັກສະນະຢ່າງໃດແມ່ນຄຳເວົ້າໃນ ມທ 6:9 ທີ່ເຕືອນໃຈຜູ້ອ້ອນວອນກ່ຽວເລື່ອງຜູ້ຮັບຄຳອ້ອນວອນ?

"ຂ້າ_________________________________________ ສະຫວັນ" (ຕື່ມຄວາມທີ່ຂາດ)

**4** ໃນເວລາທີ່ເຮົາຈະອ້ອນວອນມີສອງປະການທີ່ເຮົາສົມຄວນຈະສຳນຶກເລື່ອງ ພະບິດາກ່ອນຄື: (ຕື່ມຄວາມທີ່ຂາດລຸ່ມນີ້)

ກ. ເຮົາຈຶ່ງສຳນຶກຕົວວ່າພະເຈົ້າຄື ພະ ________ ຂອງເຮົາ ສະນັ້ນເຮົາເຊື່ອໃຈໃນ ພະອົງໄດ້.

ຂ. ພະເຈົ້າຢູ່ໃນ _________________ ເພາະເຫດນັ້ນເຮົາຕ້ອງນັບຖືພະອົງຢ່າງເໝາະສົມ.

**5** ກ. ໃນຄຳເລີ້ມຕົ້ນອ້ອນວອນນັ້ນມີຄຳເຕືອນວ່າໃຜຄືພະບິດາຂອງເຮົາ? _______________

ຂ. ພະບິດານັ້ນຢູ່ໃສ? ___________________________________________________

**6** ກ. ຄຳເລີ້ມຕົ້ນໃນຄຳອ້ອນວອນທີ່ພະເຢຊູສອນນັ້ນອ້າງເຖິງຄວາມສຳພັນແບບໃດ ລະຫວ່າງຊີດສະຕຽນກັບພະ ເຈົ້າ? _____________________________________________

ຂ. ຄຳເວົ້ານັ້ນມີຈຸດປະສົງຢ່າງໃດເພື່ອຜູ້ອ້ອນວອນ? _____________________________

| |
|---|
| ຝຶກ: ໃຫ້ທ່ານເອົາສໍສີຟ້າຂີດເສັ້ນກ້ອງຄຳເວົ້າທີ່ໃຫ້ເຮົາສຳນຶກເລື່ອງບໍລິສັກແລະທີ່ຢູ່ຂອງພະເຈົ້າໃນ ມທ 6:9 |

**7** ຫຼັງຈາກຄຳເລີ້ມຕົ້ນນັ້ນ ມີຄຳຮ້ອງຂໍດັ່ງຕໍ່ໄປນີ້:

✸ ຂໍໃຫ້ນາມຂອງພະອົງເປັນທີ່ເຄົາລົບບູຊາ.

✸ ໃຫ້ພະລາຊະອານາຈັກຂອງພະອົງມາຕັ້ງຢູ່.

✸ ຂໍໃຫ້ເປັນໄປຕາມນ້ຳພະໄທຂອງພະອົງໃນສະຫວັນເປັນຢ່າງໃດກໍ່ໃຫ້ເປັນໄປຢ່າງນັ້ນທີ່ແຜ່ນດິນໂລກ.

✸ ຂໍຊົງໂຜດປະທານອາຫານປະຈຳວັນໃຫ້ແກ່ຂ້າພະອົງທັງຫຼາຍໃນກາລະວັນນີ້.

✸ ຂໍຊົງໂຜດຍົກໂທດໃຫ້ຂ້າພະອົງເໝືອນຂ້າພະອົງຍົກໂທດໃຫ້ແກ່ຜູ້ເຮັດຜິດຕໍ່ຂ້າພະອົງນັ້ນ.

✸ ແລະຂໍຢ່າພາຂ້າພະອົງເຂົ້າໄປໃນການທົດລອງ ແຕ່ຂໍຊົງໂຜດໃຫ້ພົ້ນຈາກການຊົ່ວຮ້າຍ.

ມີການຮ້ອງຂໍທັງໝົດຈັກປະການໃນຄຳອ້ອນວອນນັ້ນ? ________________________

**8** ກ. ຄຳຮ້ອງຂໍທຳອິດຢູ່ທ້າຍຂໍ້ 9 ຈະໃຫ້ນາມຂອງໃຜເປັນທີ່ເຄົາລົບບູຊາ? ____________

ຂ. ຄຳຮ້ອງຂໍທີສອງເຫັນໃນແຖວແລກຂອງຂໍ້ 10 ເປັນທີ່ຈະໃຫ້ລາຊະອານາຈັກຂອງໃຜມາຕັ້ງໄວ້? ________________________________________________

ຄ. ສ່ວນຕໍ່ໄປນີ້ຂໍ້ 10 ນັ້ນຮ້ອງຂໍຈະໃຫ້ນ້ຳພະໄທຂອງໃຜໃຫ້ສຳເລັດ? ______________

**9** ດັ່ງນັ້ນຄຳຮ້ອງຂໍສາມປະການແລກນັ້ນບໍ່ແມ່ນຮ້ອງຂໍເພື່ອເຮົາແຕ່ຮ້ອງຂໍເພື່ອໃຜ? ________

**10** ກ. ຄຳທີ່ບັນລະຍາຍເລື່ອງ ພະເຈົ້າ ໃນສ່ວນແລກຂອງຂໍ້ 9 ເຕືອນໃຈໃຫ້ເຮົາສຳນຶກວ່າພະເຈົ້າຄື ______________________________ ຂອງເຮົາ. (ຈົ່ງຕື່ມຄວາມທີ່ຂາດ)

ຂ. ພະບິດາ ນັ້ນຢູ່ໃສ? ________________________________________

ຄ. ຕໍ່ໄປມີຄຳຮ້ອງຂໍຈັກປະການ? ____________________________________

ງ. ສ່ວນແລກທີ່ວ່າດ້ວຍ ພະເຈົ້າ ມີຈັກປະການ? ____________________________

**11** ແຕ່ວ່າຄຳຮ້ອງຂໍອີກສາມປະການຕໍ່ໄປແຕກຕ່າງກັນຫຼາຍ

ກ. ໃນຄຳຮ້ອງຂໍທີ ສີ່ (ຂໍ້ 11) ຂໍອາຫານປະຈຳວັນເພື່ອໃຜ? ______________________

ຂ. ຄຳຮ້ອງຂໍທີ ຫ້າ (ຂໍ້ 12) ຂໍໃຫ້ພະອົງຍົກໂທດຂອງໃຜ? ______________________

ຄ. ຄຳຮ້ອງຂໍທີ ຫົກ (ຂໍ້ 13) ຂໍໃຫ້ພະອົງຮັກສາໃຜບໍ່ໃຫ້ຕົກໃນການທົດລອງ? _________

**12** ດັ່ງນັ້ນຄຳຮ້ອງຂໍສາມປະການສຸດທ້າຍນີ້ ຂໍເພື່ອໃຜ? __________________________

**13** ກ.ໃນຄຳອ້ອນວອນຕາມແບບນີ້ ມີຄຳຮ້ອງຂໍທັງໝົດຈັກປະການ? ________________

ຂ. ສ່ວນແລກປະກອບດ້ວຍຈັກປະການ? __________________________________

ຄ. ສາມຂໍ້ແລກຂໍເພື່ອໃຜ? ____________________________________________

ງ. ສ່ວນສຸດທ້າຍປະກອບດ້ວຍຈັກປະການ? ______________________________

ຈ. ສາມຂໍ້ສຸດທ້າຍຂໍເພື່ອໃຜ? ________________________________________

**14** ໃນຄຳຮ້ອງຂໍຕໍ່ໄປນີ້ ໃຫ້ທ່ານຂຽນຄຳ "ພະເຈົ້າ" ຂ້າງຄຳໃດ ທີ່ຂຶ້ນກັບສ່ວນແລກທີ່ວ່າດ້ວຍພະເຈົ້າ ແລະຂຽນ ຄຳວ່າ "ຕົວເອງ" ຂ້າງຄຳທີ່ຂຶ້ນກັບສ່ວນສຸດທ້າຍທີ່ວ່າດ້ວຍຜູ້ຂໍເອງ.

ກ. ____________ ຂໍຊົງໂຜດຍົກໂທດໃຫ້ຂ້າພະອົງ.

ຂ. ____________ ຂໍໃຫ້ພະນາມຂອງພະອົງເປັນທີ່ເຄົາລົບບູຊາ.

ຄ. ____________ ຂໍໃຫ້ເປັນໄປຕາມນ້ຳພະໄທຂອງພະອົງ.

ງ. ____________ ຂໍຊົງໂຜດປະທານອາຫານປະຈຳວັນ.

ຈ. ____________ ຂໍຢ່າພາຂ້າພະອົງເຂົ້າໄປໃນການທົດລອງ.

ສ. ____________ ຂໍໃຫ້ພະລາຊະອານາຈັກຂອງພະອົງມາຕັ້ງຢູ່.

*ເອົາແຫຼະ! ບາດນີ້ເຮົາຈະຮຽນເລື່ອງຄຳຮ້ອງຂໍເທື່ອລະປະການ*

**15** ຄຳຮ້ອງຂໍທຳອິດຢູ່ທ້າຍຂໍ້ 9 ປະການນັ້ນຂໍໃຫ້ພະນາມຂອງພະເຈົ້າເປັນຢ່າງໃດ?

____________________________________________________________

**16** ຄຳທີ່ວ່າ “ໃຫ້ພະນາມຂອງພະອົງເປັນທີ່ເຄົາລົບບູຊາ” ຄືວ່າຈະໃຫ້ ພະເຈົ້າຍົກກຽດຕິຍົດໃຫ້ພະອົງເອງ. ພວກ ຄຼິດສະຕຽນຍົກກຽດຕິຍົດໃຫ້ພະເຈົ້າໃນເມື່ອເວລາເຂົາກະທຳຕາມນ້ຳພະໄທຂອງພະອົງ ແລະເຊື່ອຟັງພະທຳຂອງ ພະເຈົ້າ. ໃນຄຳເວົ້າ 4 ປະການຕໍ່ໄປນີ້ໃຫ້ທ່ານຂີດຂ້າອອກປະການໃດທີ່ບໍ່ຖະຫວາຍກຽດຕິຍົດໃຫ້ພະເຈົ້າ.

ກ. ຍົກນາມຂອງ ພະເຈົ້າມາປ້ອຍດ່າຜູ້ອື່ນ. ຂ. ໄປຢ້ຽມຢາມຄົນທຸກແລະຄົນເຈັບ.

ຄ. ສະແດງຄວາມຮັກຕໍ່ເພື່ອນບ້ານ. ງ. ເຮັດການດີລ້ຽງເມຍລູກ.

**17** ຄຳຮ້ອງຂໍທຳອິດໃນຄຳອ້ອນວອນຕາມແບບນັ້ນຄືຫຍັງ? ________________________

**18** ຄັນຖ້າເຮົາອ້ອນວອນໃຫ້ພະນາມຂອງພະອົງເປັນທີ່ໂຄລົບບູຊາທີ່ຈິງເຮົາຈະໃຫ້ພະອົງຮັບຫຍັງ? ________________________________________________________

**19** ຄຳຮ້ອງຂໍປະການທີສອງຢູ່ໃນຂໍ້ 10 ຂໍຫຍັງ? ________________________________

**20** ທີ່ຈິງແຜ່ນດິນຂອງ ພະເຈົ້າມາຕັ້ງຢູ່ແລ້ວແຕ່ບໍ່ປາກົດໃຫ້ເຫັນຢ່າງເຕັມສ່ວນເທື່ອ ພະເຢຊູຍິ່ງປົກຄອງຊີວິດມະ ນຸດແລ້ວແຜ່ນດິນຂອງ ພະເຈົ້າຍິ່ງປະກົດໃຫ້ເຫັນມາ. ຄັນຖ້າເຮົາຢາກໃຫ້ພະເຢຊູ ປົກຄອງໃນໂລກຫຼາຍຂຶ້ນຕໍ່ຫຼາຍຂຶ້ນເຮົາຈະຍົກຄຳຮ້ອງຂໍໃດມາ?

____________________________________________________________

**21** ພະເຈົ້າຈະປົກຄອງຍິ່ງຂຶ້ນໃນເມື່ອເວລາຄຼິດສະຕຽນທຸກຄົນມອບຕົວໄວ້ໃຫ້ເຊື່ອຟັງຄວາມຂອງພະອົງ, ແລະຜູ້ທີ່ ບໍ່ເຊື່ອເທື່ອນັ້ນມາຮັບເອົາພະເຢຊູເປັນພະຜູ້ຊ່ວຍແລ້ວຕັດສິນໃຈໃນທັນທີນັ້ນວ່າຈະຢູ່ໃຕ້ອຳນາດຂອງ ພະອົງຕໍ່ໄປ. ເພາະສັນນັ້ນການປົກຄອງຂອງພະເຈົ້າໃນໂລກນີ້ມີຜົນປາກົດມາທັງໃນຊີວິດຂອງຄົນທີ່ເຊື່ອແລະທັງຄົນໃດອີກ? ______________________

**22** ຂໍໃຫ້ທ່ານເອງອະທິບາຍຄວາມໝາຍທີ່ວ່າ “ຂໍໃຫ້ພະລາຊະອານາຈັກຂອງພະອົງມາຕັ້ງຢູ່”

____________________________________________________________

____________________________________________________________

____________________________________________________________

**23** ຄຳຮ້ອງຂໍປະການທີສາມຢູ່ໃນຕອນທ້າຍຂອງຂໍ້ 10 ຄືຈະໃຫ້ເປັນຕາມ _______________ ຂອງພະອົງໃນ ___________ ເປັນຢ່າງໃດກໍ່ໃຫ້ເປັນໄປຢ່າງນັ້ນໃນແຜ່ນດິນ __________ (ຈົ່ງຕື່ມຄວາມທີ່ຂາດ)

**24** ຫຼາຍຄົນຄິດວ່າຄຳອ້ອນວອນເປັນພຽງແຕ່ວິທີຊອກຫາຜົນປະໂຫຍດສ່ວນຕົວຈາກ ພະເຈົ້າ. ບໍ່ແມ່ນດອກ! ຄຳ ຮ້ອງຂໍປະການທີສາມນີ້ບໍ່ແມ່ນທີ່ຈະເອົາໃຈຕົວເອງ ແຕ່ເພື່ອຈະເອົາໃຈໃຜ?

_______________________________________________________________

**25** ກ. ໃຫ້ອ່ານ ມທ 7:11 ພໍ່ແມ່ໃດໆກໍ່ຕາມຍັງມີສ່ວນບົກຜ່ອງ ແຕ່ຜູ້ເປັນພໍ່ແມ່ທຳມະດາຈະເອົາຫຍັງໃຫ້ລູກ? _______________________________________________

ຂ. ຍິ່ງກວ່ານັ້ນອີກພະເຈົ້າຜູ້ບໍ່ມີສ່ວນບົກຜ່ອງຈະເອົາຫຍັງມາໃຫ້ລູກທີ່ຂໍຈາກພະອົງ? ______

**26** ກ. ຄັນຖ້າເດັກນ້ອຍຈະຂໍສິ່ງໜຶ່ງສິ່ງໃດທີ່ພໍ່ຮູ້ວ່າອັນນັ້ນເປັນອັນຕະລາຍຄື: ປືນ ຫຼື ຢາພິດພໍ່ນັ້ນຈະໃຫ້ບໍ່? __________ ພໍ່ຈະບໍ່ໃຫ້ເພາະເຖິງວ່າເດັກນ້ອຍບໍ່ຮູ້ອັນຕະລາຍກໍ່ຕາມແຕ່ພໍ່ກໍ່ຮູ້ຢູ່ແລ້ວ.

ຂ. ເຊັ່ນດຽວກັນຄັນຖ້າວ່າຄົນເຮົາຂໍສິ່ງໜຶ່ງສິ່ງໃດທີ່ອັນຕະລາຍແກ່ເຮົາຈາກພະເຈົ້າພະອົງຈະປະທານໃຫ້ເຮົາບໍ່? _____________________________________________

ຄ. ບໍ່ໃຫ້ເພາະຮູ້ວ່າເປັນອັນຕະລາຍສະນັ້ນແມ່ນໃຜຮັກເຮົາຫຼາຍກວ່າພະເຈົ້າ ຫຼື ພໍ່ແມ່? ___

**27** ເປັນຫຍັງເຮົາຈະຂໍໃຫ້ເປັນຕາມນ້ຳພະໄທຂອງພະອົງ? (ເລືອກ)

ກ. ເພາະ ພະເຈົ້າຮູ້ຫຼາຍກວ່າເຮົາທຸກຄົນ.

ຂ. ເພາະ ພະເຈົ້າຮູ້ເທົ່າກັບເຮົາທຸກຄົນ.



**28** ທີ່ເຮົາຈະຊອກຫານ້ຳພະໄທຂອງພະເຈົ້າ ແລະ ທີ່ເຮົາຈະຖ້າຮັບໂຊກ ຫຼື ຄວາມຊົ່ວຮ້າຍມາເຖິງຕົວຕ່າງກັນຢູ່, ໃນ ຮູບນີ້ເປັນຕາມນ້ຳພະໄທທີ່ຄົນນັ້ນຈະປຽກຝົນບໍ່? _________

ເປັນຫຍັງຈຶ່ງຮູ້? _______________________________________________

**29** ສ່ວນຄົນຊຶດສະຕຽນບໍ່ແມ່ນແຕ່ຈະຖ້າຮັບໂຊກ ຫຼືຄວາມຊົ່ວຮ້າຍມາເຖິງຕົວດັ່ງນັ້ນຊຶດສະຕຽນຈະຕ້ອງຊອກຫາ ນ້ຳພະໄທຂອງພະເຈົ້າຢ່າງກະຕືລືລົ້ນ. ຄຳທີ່ວ່າ "ຂໍໃຫ້ເປັນໄປຕາມນ້ຳພະໄທຂອງພະອົງ"ໝາຍຄວາມວ່າຢ່າງໃດ? ຈົ່ງຂີດຂ້າອອກຂໍ້ທີ່ບໍ່ຖືກ.

ກ. ເຫດການໃດໆກຳນົດໄວ້ແລ້ວລ່ວງໜ້າ.

ຂ. ພະເຈົ້າຮູ້ທາງດີແລ້ວເລືອກທາງນັ້ນໄວ້ສຳລັບຜູ້ທີ່ເຊື່ອໄວ້ໃຈກັບພະອົງ.

ຄ. ຄັນຖ້າວ່າເຮົາເລີກບໍ່ພະຍາຍາມເຮັດຫຍັງຜູ້ໃດກໍ່ຖືວ່າເຮົາຖືສິນດີ.

**30** ໃຫ້ທ່ານເອົາຫົວຂໍ້ຄຳອະທິບາຍຈາກຂ້າງຂວາ ມາຈັບຄູ່ໃຫ້ຖືກກັບຄຳອ້ອນວອນທີ່ຢູ່ຂ້າງຊ້າຍ.

______ ກ. ໃຫ້ພະນາມຂອງພະອົງເປັນທີ່ເຄົາລົບບູຊາ.

______ ຂ. ຂໍໃຫ້ພະລາຊະອານາຈັກຂອງພະອົງມາຕັ້ງຢູ່.

______ ຄ.ໃຫ້ເປັນໄປຕາມນ້ຳພະໄທຂອງພະອົງ.

1. ໃຫ້ພະອົງປົກຄອງຫຼາຍຍິ່ງຂຶ້ນ.
2. ໃຫ້ເປັນໄປຕາມທີ່ ພະເຈົ້າຈະເຫັນຊອບ.
3. ໃຫ້ພະອົງໄດ້ຮັບກຽດຕິຍົດ.

**31** (ຈົ່ງຕື່ມຄວາມທີ່ຂາດຕໍ່ໄປນີ້) ຄຳອ້ອນວອນຕາມແບບນີ້ຕັ້ງຕົ້ນດ້ວຍຄຳທີ່ສັນລະເສີນຍົດສັກຂອງພະເຈົ້າ. ຕໍ່ໄປນີ້ມີຄຳຮ້ອງຂໍ _______ ປະການສາມປະການແລກວ່າດ້ວຍ _________ ແລະອີກ ______|ປະການວ່າດ້ວຍຜູ້ ________________________________________

**32** ຄຳຮ້ອງຂໍສ່ວນແລກຄືຂໍສິ່ງທີ່ວ່າດ້ວຍພະບິດາໃນສະຫວັນຄືວ່າພະນາມຂອງພະອົງແລະນ້ຳພະໄທຂອງພະອົງ ອີກດ້ວຍ. ເຮົາອາດຈະຍົກບົດຮຽນຈາກນີ້ວ່າເວລາໃດທີ່ຈະອ້ອນວອນເຮົາຄວນຈະມີສ່ວນທີ່ບໍ່ຫ່ວງການສ່ວນຕົວແຕ່ທີ່ເນັ້ນຄຳກັບ ____________ (ຕື່ມຄວາມທີ່ຂາດ)

**33** ຄຳຮ້ອງຂໍປະການທີ ສີ່ ຢູ່ໃນຂໍ້ 11 ໃນຄຳຮ້ອງຂໍນີ້ເຮົາຂໍສິ່ງໃດຈາກ ພະເຈົ້າ? ___________

**34** ແຕ່ຄຳຮ້ອງຂໍນີ້ບໍ່ໄດ້ໝາຍເຖິງແຕ່ອາຫານສິ່ງດຽວຍັງໝາຍເຖິງທຸກສິ່ງທີ່ຈຳເປັນເພື່ອຊີວິດຂອງເຮົາ. ໃຫ້ທ່ານຂີດ ຂ້າອອກສິ່ງໃດທີ່ບໍ່ຈຳເປັນເພື່ອລ້ຽງຊີວິດ.

ກ. ແກງ ຂ. ສິ້ງ ຄ. ການຍົກໂທດຜິດບາບ

ງ. ນ້ຳກິນ ຈ. ເງິນຊື້ອາຫານ ສ. ຊື່ສຽງດີ.

ຊ. ຄວາມສາມາດປ່າວປະກາດຂ່າວປະເສີດ.

**35** ບາງຄົນທີ່ຢູ່ໃນເມືອງອາດຈະວ່າ "ແຕ່ຂ້ອຍຊື້ອາຫານໄດ້ໃນຕະຫຼາດຊື້ດ້ວຍເງິນຄຳ ເປັນຈັ່ງໃດຕ້ອງຂໍຈາກ ພະ ເຈົ້າ!" ໃຫ້ອ່ານ ຢາໂກໂບ 1:17 ຕາມຂໍພະຄຳພີນັ້ນ ແມ່ນເພາະເຫດໃດທີ່ເຮົາຈຶ່ງຂໍສິ່ງທີ່ລ້ຽງຊີວິດຈາກພະເຈົ້າ. (ໃຫ້ຂີດຂ້າອອກຂໍໃດທີ່ບໍ່ຖືກ)

ກ. ເຮົາຂໍເພື່ອບໍ່ໃຫ້ ພະເຈົ້າເສຍໃຈ.

ຂ. ເຮົາຂໍຈາກພະເຈົ້າຫາກວ່າບໍ່ມີໃນຕະຫຼາດ.

ຄ. ເຮົາຂໍຈາກພະເຈົ້າເພາະທຸກສິ່ງມາຈາກ ພະອົງ.

**36** ທີ່ຈິງວັດຖຸສິ່ງຂອງທຸກຢ່າງມາຈາກພະເຈົ້າພະອົງໃຊ້ຫຼາຍເສັ້ນທາງເພື່ອໃຫ້ໄດ້ສິ່ງທີ່ຈຳເປັນເພື່ອຊີວິດຂອງເຮົາ.

ກ. ທຸກເທື່ອທີ່ທ່ານກິນເຂົ້າມີຄົນໃດແດ່ເຮັດກ່ອນທ່ານຈະກິນໄດ້? ___________________

ຂ. ຖ້າຈະກິນໄກ່ເດ? ________________________________________________

ຄ. ເສື້ອໜຸ່ງເດ? ____________________________________________________

ງ. ຄຸຕັກນ້ຳເດ? _____________________________________________________

*ໃນເສດຖະກິດຂອງປະເທດລາວເຮົາມີລະບົບເຮັດວຽກທີ່ສະຫຼັບຊັບຊ້ອນເພື່ອການຜະລິດຜົນໃຫ້ປະຊາຊົນທົ່ວປະເທດຄື: ຜູ້ຫາໃຫ້ຜູ້ຜະລິດຜົນຜູ້ຂົນສົ່ງຜູ້ຄ້າຂາຍ ໆລໆດັ່ງນັ້ນເທື່ອໃດ ທີ່ເຮົາຂໍຈາກພະເຈົ້າໃຫ້ປະທານ ອາຫານປະຈຳວັນໃຫ້ເຮົາໄດ້ອ້ອນວອນເພື່ອຄົນເຫຼົ່ານັ້ນໝົດ.*

**37** ຄຳຮ້ອງຂໍ "ຊົງໂຜດປະທານອາຫານປະຈຳວັນ" ນັ້ນວ່າດ້ວຍຄວາມຕ້ອງການຂອງເຮົາຢ່າງທີ່ຈຳເປັນ. ນອກ ຈາກສິ່ງທີ່ຈຳເປັນຢ່າງນັ້ນ ພະເຈົ້າ ອາດຈະໃຫ້ເຮົາໄດ້ສ່ວນອື່ນໆອີກດ້ວຍ. ໃນລາຍຊື່ຕໍ່ໄປນີ້ມີອັນໃດທີ່ຈຳເປັນ? (ໃຫ້ໝາຍດ້ວຍເຄື່ອງ √ )

ກ. _______ ເຄື່ອງພໍໜຸ່ງຫົ່ມຕົວ.

ຂ. _______ ເຄື່ອງໜຸ່ງຕາມແບບສະໄໝ.

ຄ. _______ ຊີ້ນມື້ລະສາມສີ່ເທື່ອ.

ງ. _______ ອາຫານພໍລ້ຽງຊີວິດ.

ຈ. _______ ເຄື່ອງມືພໍເຮັດວຽກໄດ້.

ສ. _______ ວິທະຍຸທີ່ດີກວ່າຂອງໝູ່.

**38** ມີຄຳຮ້ອງຂໍປະການທີ ຫ້າໃນຂໍ້ 12 ເຊິ່ງຂໍນັ້ນເຮົາຂໍໃຫ້ ພະເຈົ້າຍົກຫຍັງ? _____________

**39** ໃນຫຼັກສູດເຫຼັ້ມທີ 2 ເລື່ອງສະໄໝປີທີ່ ພະເຢຊູຕຽມຕົວ ບົດທີ 20 ແລະ 21 ກ່ຽວກັບການສາລະພາບ ຜິດບາບໃນຄຳອ້ອນວອນຕາມແບບນີ້ ໃຫ້ທ່ານອ່ານ ມທ 6:12 ຕະຫຼອດ. ຖ້າເຮົາຈະຂໍ ພະເຈົ້າຍົກໂທດໃຫ້ເຮົາ, ເຮົາຄວນຈະເຮັດຫຍັງແກ່ຜູ້ທີ່ເຮັດຜິດຕໍ່ເຮົາ? _____________

_______________________________________________________________

**40** ທ່ານສັງເກດວ່າການຍົກໂທດໃຫ້ຜູ້ອື່ນຍາກບໍ່? ແຕ່ໃນຂໍ້ນີ້ເຫັນວ່າເຮົາຈຳເປັນຕ້ອງຍົກໂທດໃຫ້ຄົນອື່ນກ່ອນຈະຂໍ ໃຫ້ພະເຈົ້າຍົກໂທດໃຫ້ເຮົາ. ໃຫ້ອ່ານ ມັດທາຍ 6:14-15 ພະເຢຊູວ່າຢ່າງໃດໃນສອງຂໍ້ນັ້ນ? ໃຫ້ຂີດຂ້າ ອອກອັນໃດທີ່ບໍ່ຖືກ.

ກ. ບໍ່ຈຳເປັນທີ່ຈະຍົກໂທດໃຫ້ຜູ້ອື່ນ.

ຂ.ຈຳເປັນທີ່ເຮົາຈະຍົກໂທດໃຫ້ເພິ່ນເພາະພະເຈົ້າຍົກໂທດໃຫ້ເຮົາແລ້ວ.

ຄ.ຈຳເປັນຈະຍົກໂທດໃຫ້ແຕ່ສະເພາະຜູ້ທີ່ຈະຍົກໂທດໃຫ້ເຮົາກ່ອນ.

*ຮູບກາຕູນຕໍ່ໄປນີ້ສະແດງເຖິງຄຳອຸປະມາຂອງພະເຢຊູ ໃນ ມທ 18:23-35*




**41** ທ່ານຄິດຢ່າງໃດກ່ຽວກັບຂ້າໃຊ້ຄົນນັ້ນ? ເລືອກໝາຍເອົາຂໍ້ທີ່ຖືກ.

ກ. ເພິ່ນເຮັດຖືກຢູ່ເພື່ອນນັ້ນຄວນຈະໃຊ້ໜີ້ໃຫ້ເຖິງຈະນ້ອຍກໍ່ຕາມ.

ຂ. ເພິ່ນເຮັດບໍ່ຖືກກະສັດຍົກໂທດໃຫ້ເຂົາເຊັ່ນດຽວກັນເພິ່ນຄວນຈະຍົກໂທດໃຫ້ຜູ້ອື່ນ.

ຄ. ເພິ່ນເຮັດບໍ່ຖືກກໍ່ຕາມແຕ່ເປັນຢ່າງໃດກໍ່ຊ່າງໂທດນັ້ນໜັກຫຼາຍ.

*ທ່ານຜູ້ຮຽນເອີຍ!ມີຄົນໃດທີ່ເຮັດຜິດຕໍ່ທ່ານບໍ່? ຖ້າວ່າພະເຈົ້າໄດ້ຍົກຜິດບາບຢ່າງໜັກຂອງທ່ານ, ທ່ານຈະບໍ່ຍອມຍົກຜິດຜູ້ອື່ນເໝືອນກັນບໍ! ໃຫ້ທ່ານອ້ອນວອນແລ້ວສຳນຶກຕົວຕໍ່ໜ້າພະເຈົ້າເລື່ອງນີ້ແລ້ວປະຕິບັດຕາມການຊົງນຳເນີ!*

**42** ກ. ເທື່ອໃດທີ່ເຮົາອ້ອນວອນຕາມແບບວ່າ "ຂໍຊົງໂຜດຍົກໂທດໃຫ້ຂ້າພະອົງ" ແມ່ນວ່າເຮົາຂໍໃຜຍົກໂທດໃຫ້ເຮົາ? ______________________________

ຂ. ແລ້ວພວກເຮົາຈະຍົກໂທດໃຫ້ໃຜອີກ? ______________________

**43** ກ. ຄຳຮ້ອງຂໍປະການທີ ຫົກເຫັນໃນຂໍ້ 13ຂໍ້ນັ້ນຂໍນຳພະເຈົ້າບໍ່ໃຫ້ເຮົາເຂົ້າໄປໃນຫຍັງ?

______________________________

ຂ. ແຕ່ໃຫ້ເຮົາພົ້ນຈາກຫຍັງ? ___________________________________________

**44** 1 ໂກລິນໂທ 10:13 ບອກວ່າ "ພະເຈົ້າຊົງທ່ຽງທຳພະອົງບໍ່ຊົງຍອມໃຫ້ພວກເຈົ້າຖືກທົດລອງເກີນກວ່າທີ່ເຈົ້າ ຈະທົນໄດ້" ໃຫ້ທ່ານຂີດຂ້າອອກຂໍ້ໃດທີ່ບໍ່ຖືກ.

ກ. ພະເຈົ້າ ທົດລອງພວກເຮົາ.

ຂ. ພະເຈົ້າ ໃຫ້ເຮົາຖືກທົດລອງຢ່າງບໍ່ຈຳກັດ.

ຄ. ພະເຈົ້າ ບໍ່ໃຫ້ເຮົາຖືກທົດລອງເກີນກວ່າທີ່ຈະທົນໄດ້.

**45** ໃນຄຳຮ້ອງຂໍນີ້ເຮົາຂໍຈາກພະເຈົ້າບໍ່ໃຫ້ມີການທົດລອງຢ່າງໃດ? (ເລືອກໝາຍເອົາ 2 ຂໍ້ທີ່ຖືກ)

ກ. ດົນກວ່າທີ່ຈະທົນໄດ້.

ຂ. ໜັກກວ່າທີ່ຈະທົນໄດ້.

ຄ. ທົດລອງເຮັດການດີ.

**46** ກ. ແຕ່ເປັນຢ່າງໃດກໍ່ຕາມເຮົາຍັງຈະຖືກທົດລອງຢູ່ຄຳວ່າ "ຢ່າພາຂ້າພະເຈົ້າເຂົ້າໃນການທົດລອງ"ໝາຍ ຄວາມວ່າບໍ່ໃຫ້ພົບການທົດລອງທີ່ ______ ເກີນໄປ ຫຼື ທີ່ຢູ່ ______ ເກີນໄປ. (ຕື່ມຄວາມທີ່ຂາດ)

ຂ. ຄຳວ່າ "ໃຫ້ພົ້ນຈາກການຊົ່ວຮ້າຍ" ຮ້ອງຂໍບໍ່ໃຫ້ຕົກໃນຄວາມຜິດ __________________ (ຕື່ມຄວາມທີ່ຂາດ)

**47** ໃຫ້ທ່ານເອົາຄຳອະທິບາຍທີ່ຢູ່ຂ້າງຂວາ ມາຈັບຄູ່ໃຫ້ຖືກກັບຄຳອ້ອນວອນຂ້າງຊ້າຍ.

______ ກ. ຂໍຊົງໂຜດປະທານອາຫານປະຈຳວັນ.

______ ຂ. ຂໍຊົງຍົກໂທດໃຫ້ຂ້າພະອົງ.

______ ຄ. ຂໍຢ່າພາຂ້າພະອົງເຂົ້າໄປໃນການທົດລອງ.

1. ບໍ່ໃຫ້ຖືກທົດລອງໜັກເກີນໄປ ຫຼື ດົນເກີນໄປ.
2. ມີສິ່ງຂອງພໍລ້ຽງຊີວິດ.
3. ໃຫ້ຍົກຜິດບາບເຮົາ.
4. ໃຫ້ເຮົາຮັບກຽດຕິຍົດ.

*ກ່ອນທີ່ທ່ານບໍ່ໄດ້ຮຽນເລື່ອງການອ້ອນວອນຕາມແບບໃນບົດນີ້ ທ່ານອາດຈະຄືກັບຄົນໜຶ່ງຄົນໃດໃນໜ້າປົກນັ້ນ. ຈາກນີ້ຕໍ່ໄປທ່ານອາດຈະອ້ອນວອນໂດຍເຂົ້າໃຈຄວາມໝາຍພ້ອມ. ຖ້າຈະທ່ອງຂຶ້ນໃຈໄວ້ ພວກທ່ານອາດຈະໃຊ້ເປັນອ້ອນວອນລວມໃນການນະມັດສະການຄຼິດສະຕະຈັກ ຫຼື ໃນຄອບຄົວກໍ່ໄດ້ເຊັ່ນກັນ.*

*ຢ່າລືມເຮັດບົດເສັງເລີຍເດີ!*

**ຄຳຕອບ:**

**1** *ມທ 7:9-13*

**2** *ຂ. ງ. ແລະ ຈ. ຖືກ*

**3** *"ຂ້າແດ່ພະບິດາຂອງຂ້າພະອົງທັງຫຼາຍຜູ້ຊົງສະຖິດໃນສະຫວັນ" ພະເຈົ້າ ຄືໃຜ ແລະ ຢູ່ບ່ອນໃດ.*

**4** *ກ. ພະບິດາ ຂ. ສະຫວັນ*

**5** *ກ. ພະເຈົ້າ ຂ. ສະຫວັນ*

**6** *ກ. ພະເຈົ້າ ເປັນພະບິດາຂອງເຮົາ ຂ. ໃຫ້ຜູ້ອ້ອນວອນສຳນຶກຕົວວ່າ*

**7** *6 ປະການ*

**8** *ກ. ພະເຈົ້າ ຂ. ພະເຈົ້າ ຄ. ພະເຈົ້າ*

**9** *ພະເຈົ້າ*

**10** *ກ. ພະບິດາ ຂ. ສະຫວັນ ຄ. 6 ປະການ ງ. 3 ປະການ*

**11** *ກ. ເພື່ອຜູ້ອ້ອນວອນເອງ ຂ. ຍົກໃຫ້ຜູ້ອ້ອນວອນເອງ*
*ຄ. ຮັກສາຜູ້ອ້ອນວອນເອງ*

**12** *ເພື່ອຕົວເອງ*

**13** *ກ. 6 ປະການ ຂ. 3 ປະການ ຄ. ພະເຈົ້າ ງ. 3 ປະການ ຈ. ຕົວເອງ*

**14** *ຂຽນ " ພະເຈົ້າ " ໃສ່ ຂ. ຄ. ແລະ ສ.*
*ຂຽນ " ຕົວເອງ " ໃສ່ ກ. ງ. ແລະ ຈ.*

**15** *ເປັນທີ່ເຄົາລົບບູຊາ.*

**16** *ຂີດຂ້າອອກແຕ່ຂໍ້ ກ.*

**17** *ໃຫ້ພະນາມຂອງພະອົງເປັນທີ່ເຄົາລົບບູຊາ.*

**18** *ຮັບກຽດຕິຍົດ.*

**19** *"ຂໍໃຫ້ພະລາຊະອານາຈັກຂອງພະອົງມາຕັ້ງຢູ່"*

**20** *"ຂໍໃຫ້ພະລາຊະອານາຈັກຂອງພະອົງມາຕັ້ງຢູ່"*

**21** *ຄົນທີ່ຍັງບໍ່ເຊື່ອອີກດ້ວຍ.*

**22** *(ຄຳຕອບນັ້ນໃຫ້ມີເນື້ອໃນວ່າແຜ່ນດິນຂອງ ພະເຈົ້າຈະປາກົດມາຫຼາຍທະວີຂຶ້ນ ໃນ ຊີວິດຄົນທີ່ເຊື່ອແລະຄົນທີ່ບໍ່ເຊື່ອ)*

**23** *ນ້ຳພະໄທ...ສະຫວັນ...ໂລກ.*

**24** *ພະເຈົ້າ*

**25** *ກ. ຂອງດີ. ຂ. ຂອງດີ.*

**26** *ກ. ບໍ່ໃຫ້. ຂ. ບໍ່ໃຫ້. ຄ. ພະເຈົ້າ*

**27** *ກ. ຖືກ*

**28** *ບໍ່... ເພາະເພິ່ນມີຄັນຮົ່ມຢູ່ພຽງແຕ່ບໍ່ຢາກໃຊ້*

**ຄຳຕອບ (ຕໍ່):**

**29** *ຂີດຂ້າຂໍ້ ກ.ແລະ ຄ.ອອກ*

**30** *ກ. ຖືກກັບ 3. ຂ. ຖືກກັບ 1. ຄ. ຖືກກັບ 2.*

**31** *3... ພະເຈົາ... 3... ອ້ອນວອນ.*

**32** *ພະເຈົາ*

**33** *ອາຫານ*

**34** *ຂີດຂ້າອອກຂໍ້ ຄ. ສ. ແລະ ຊ.*

**35** *ຂີດຂ້າອອກຂໍ້ ກ. ແລະ ຂ.*

**36** *ບໍ່ມີຄຳຕອບຕາຍຕົວ ຈິ່ງແລກປ່ຽນຄວາມ ຄິດເຫັນກັນໃນປະຊຸມ.*

**37** *ກ. ງ. ແລະ ຈ. ຖືກ*

**38** *ຍົກໂທດ.*

**39** *ເຮົາຕ້ອງຍົກໂທດໃຫ້ເຂົາດ້ວຍ.*

**40** *ຂີດຂ້າອອກຂໍ້ ກ. ແລະ ຄ.*

**41** *ເອົາແຕ່ທ່ານເຫັນດີ ແຕ່ຂໍ້ ຂ. ຖືກດີກວ່າໝູ່.*

**42** *ກ. ພະເຈົາ ຂ. ຜູ້ທີ່ເຮັດຜິດຕໍ່ເຮົາ.*

**43** *ກ. ການທົດລອງ. ຂ. ການຊົ່ວຮ້າຍ.*

**44** *ຂີດຂ້າອອກຂໍ້ ກ. ແລະ ຂ.*

**45** *ກ. ແລະ ຂ. ຖືກ*

**46** *ກ. ໜັກ...ດິນ ຂ. ບາບ*

**47** *ກ. ຖືກກັບ 2 ຂ. ຖືກກັບ 3 ຄ. ຖືກກັບ 1*